ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 073 /ທຄຕລ 2020
ນະຄອນຫຼວງວຽງຈັນ, ວັນທີ: 08 SEP 2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ໃນນະຄອນຫຼວງວຽງຈັນ.
**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ **Tape Library LTO8** ແລະ **File Server.**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນເຄື່ອງ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

❖ **Specification:**

| **Tape Library LTO8 ຈຳນວນ 01 ເຄື່ອງ** | |
|---|---|
| **Specification** | **Quantity** |
| Chassis Size | 3 U (Base) |
| Tape Drive LTO 8 Half-Hight | 3 |
| Max. Tape Drives per system | 21 Half-Hight Tape Drives or 7 Full-Hight Tape Drives |
| cartridge slots | 40 |
| Max. Cartridge LTO slots per system | Up to 280 (via expansion modules) |
| Interface 8Gb FC | 3 |
| FC Cables 15 meters OM3 or OM4 FC cable same brand | 3 |
| OS Capability | RedHat 6 or higher, IBM AIX 7.1 or higher |
| Media Cartridge LTO 8 | 50 |
| Media Cleaner Cartridge Support LTO8 | 5 |
| SAN Path Failover | License Included |
| Implementation | Hardware and Software |
| Hardware Warranty | 3 Years |
| MA Support | 3 years<br>- Product should be register by BCEL name<br>- Local & Direct Support<br>- BCEL can open case online via: Web, Chat, Phone, Email<br>- Case(s) can be escalated based on severity level<br>- Support team member should have Knowledge Linux RedHat & IBM AIX |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

❖ **File Server ຈຳນວນ 1 ຊຸດ (NAS Gateway 2 ໜ່ວຍ ແລະ storage array 1 ໜ່ວຍ ):**

| ລຳດັບ | ອຸປະກອນ | ເງື່ອນໄຂກ່ຽວກັບສະເປັກເຄື່ອງທີ່ສຳຄັນ | ຈຳນວນ |
|---|---|---|---|
| 1 | NAS gateway | - Windows Storage Servers 2016 Standard Edition<br>- CPU Intel 4208 2.1G, 8C/16T<br>- 32 GB RAM<br>- 2 x 600GB 10K RPM SAS 12Gbps (OS)<br>- Support RAID 1<br>- SAS 12Gbps HBA External Controller<br>- Redundant Power Supply (1+1)<br>- Dual Port 10GbE SFP+ and 10GbE SFP+ Transceiver module<br>- Dual Port 1GbE BASE-T<br>- 3 Years Warranty | 2 unit |
| 2 | Storage Array | - At least 20TB usable capacity after RAID 6<br>- 12Gb SAS Dual Controller<br>- Redundant Power Supply (1+1)<br>- 4 x SAS Cable 1-2M<br>- 3 Years Warranty | 1 unit |

**ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **<u>ເອກະສານຊອງທີ 1 (ບໍ່ປິດຊອງ).</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ຕ້ອງມີວິຊາການສະເພາະ ແລະ ດຳເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ (ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2019, ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ).
2. ລະບຸຍີ່ຫໍ້, ປີຜະລິດສິນຄ້າ, ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງອຸປະກອນ **Tape Library LTO8** ແລະ **File Server** ໃຫ້ພາກສ່ວນອື່ນ.
3. ກຳນົດຍື່ນຊອງມາດຕະຖານເຕັກນິກດ້ານໄອທີ ຈະປິດຮັບໃນວັນສຸກ ວັນທີ **18/09/2020 ເວລາ 09:30** ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

❖ **<u>ເອກະສານຊອງທີ 2 (ປິດຊອງ).</u>**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ໃນວັນອັງຄານ ວັນທີ **25/09/2020 ເວລາ 09:30** ໂມງ ແມ່ນມື້ເປີດຊອງປະມູນແຈ້ງໃຫ້ ບໍລິສັດ, ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C.
3. ບໍລິສັດຜູ້ສະໜອງຕ້ອງກຳນົດລຸ້ນ, Hardware & Software ຕ່າງໆ ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ. ການຈັດຊື້ແມ່ນຈະເລືອກເອົາຍີ່ຫໍ້ໃດໜຶ່ງເທົ່ານັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 29/10/2020) ຫຼື ແຊັກທີ່ວິຊາແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ **<u>ໝາຍເຫດ:</u>** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄໍ້າປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- **ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

* ງວດທີ1: ຊຳລະ 90% ຂອງມູນຄ່າ ພາຍຫຼັງໄດ້ຮັບເຄື່ອງ ແລະ ຕິດຕັ້ງສຳເລັດ.

* ງວດທີ2: ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄໍ້າປະກັນຄຸນະພາບສິນຄ້າ 06 ເດືອນ, ແຕ່ການຮັບປະກັນຄຸນນະພາບສິນຄ້າ ຕ້ອງແມ່ນຕາມໄລຍະເວລາຂອງສິນຄ້າດັ່ງກ່າວ ທີ່ຜູ້ສະໜອງແຈ້ງເບື້ອງຕົ້ນ , ຖ້າຫາກຜູ້ສະໜອງເມີນເສີຍ ບໍ່ເຂົ້າມາສ້ອມແປງບຳລຸງຮັກສາ ແມ່ນ ທຄຕລ ຈະປັບໄໝ 20% ຂອງມູນຄ່າ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ປະທານຄະນະກຳມະການປະມູນ**

ທະນາຄານການຄ້າຕ່າງປະເທດລາວມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ບັນທະລາດ ແກ້ວປະເສີດ

ສອບຖາມລາຍລະອຽດເພີ່ມເຕີມ:

E-mail: itcenter@bcel.com.la (ສຳລັບສອບຖາມສະເປັກ)

- bidcommittee@bcel.com.la

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ …………/ທຄຕລ, ລົງວັນທີ ………………….. (ຍື່ນຊອງສະເປັກບໍ່ເກີນ ວັນທີ …………………….)

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ໃບອະນຸຍາດເປັນຕົວແທນ | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປີທີ່ຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນລັດຖະການ) | |
| 1 | ບ/ສ……… | (999/ 02.01.2015) | 2019 | …. ປີ | (ໃຫ້ລະບຸ) | (ໃຫ້ລະບຸ, ຖ້າມີ) | (ໃຫ້ລະບຸລະອຽດ) | ປີ ........... | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານ:

ຊື່:

ໂທ: